# ລາຍລະອຽດໜ້າທີ່ຮັບຜິດຊອບ

## ຜູ້ປະສານງານຂັ້ນເມືອງ ວຽກງານປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນທາງດ້ານ ສະບຽງອາຫານ (ຄປພ) ກອງທຶນຫລຸດຜ່ອນຄວາມທຸກຍາກ

| | |
|---|---|
| ຊື່ໂຄງການ: | ໂຄງການປັບປຸງຊີວິດການເປັນຢູ່ເພື່ອຄ້ຳປະກັນດ້ານໂພສະນາການ (ຄປພ) |
| ຈຳນວນຕຳແໜ່ງ: | 03 |
| ຕຳແໜ່ງ: | ຜູ້ປະສານງານ ຂັ້ນເມືອງ |
| ລາຍງານໂດຍກົງຫາ: | ຜູ້ປະສານງານ ຂັ້ນແຂວງ |
| ໜ້າທີ່ຮັບຜິດຊອບທົ່ວໄປ: | ນຳພາ ແລະ ຄຸ້ມຄອງທີມງານຂັ້ນເມືອງ ຂອງ ຄປພ ເຊິ່ງປະກອບມີ ວິຊາການດ້ານປັບປຸງຊີວິດການເປັນຢູ່ 1 ທ່ານ, ວິຊາການດ້ານໂພສະນາການ 1 ທ່ານ ແລະ ລວມໄປເຖິງ 06 ທ່ານ ທີ່ເປັນຜູ້ປະສານງານຂັ້ນບ້ານ. |
| ບ່ອນປະຈຳການ: | ຫ້ອງການ ທລຍ ເມືອງ ຊຽງຄໍ້, ເມືອງ ຊຳໃຕ້ ແຂວງ ຫົວພັນ, ເມືອງ ນອງ ແຂວງ ສະຫວັນນະເຂດ ແລະ ເດີນທາງໄປປະຕິບັດວຽກງານຢ່າງເປັນປົກກະຕິ ເພື່ອຊ່ວຍເຫລືອກຸ່ມຊ່ວຍເຫລືອເຊິ່ງກັນແລະກັນ ໃນບັນດາກຸ່ມບ້ານ ແລະ ບ້ານເປົ້າໝາຍ |
| ປະເພດສັນຍາ: | ເປັນລາຍປີ ໂດຍອີງຕາມຜົນການປະຕິບັດວຽກຕົວຈິງ ໃນແຕ່ລະໄລຍະ. ມີໄລຍະທົດສອບວຽກ 3-6 ເດືອນ ໃນເວລາເຂົ້າເຮັດວຽກໃໝ່ |

### ຈຸດປະສົງຫລັກຂອງຕຳແໜ່ງ:

ແມ່ນເພື່ອຮັບປະກັນບັນດາກິດຈະກຳຕ່າງໆຂອງໂຄງການໄດ້ຖືກປະຕິບັດ ຢ່າງຖືກຕ້ອງໃນຂັ້ນເມືອງ ຈົນຮອດຂັ້ນບ້ານໂດຍປະຕິບັດຕາມຄູ່ມືຈັດຕັ້ງປະຕິບັດຂອງໂຄງການ, ນຳພາ ແລະ ປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງກັບ ໂຄງການ ຄປພ, ແນະນຳ ແລະ ນຳພາ ພະນັກງານ ຂອງໂຄງການ ຄປພ ໃນຂັ້ນເມືອງ ແລະ ຂັ້ນບ້ານ ໃນເວລາລົງສະໜາມ.

### ໜ້າທີ່ ແລະ ຄວາມຮັບຜິດຊອບຫລັກ:

- ເຮັດວຽກໃກ້ຊິດຕິດແທດກັບຜູ້ປະສານງານ ທລຍ ຂັ້ນແຂວງ
- ປະສານງານ ແລະ ຮ່ວມມື ຢ່າງເປັນປົກກະຕິ ນຳຫົວໜ້າທີມຂອງ ທລຍ ຂັ້ນເມືອງ ເພື່ອຕິດຕາມການຈັດຕັ້ງປະຕິບັດ ແລະ ຄວາມຄືບໜ້າຂອງໂຄງການ.
- ກວດກາການຈັດຕັ້ງປະຕິບັດທຸກໆກິດຈະກຳ ແລະ ຂະບວນການພາຍໃນເມືອງ, ພາຍໃນກຸ່ມບ້ານ ແລະ ບັດດາບ້ານ ຂອງ ກຸ່ມຊ່ວຍເຫລືອເຊິ່ງກັນແລະກັນ ແລະ ສູນໂພສະນາການຂັ້ນບ້ານ.

- ຄຸ້ມຄອງເບິ່ງແຍງ ພະນັກງານວິຊາການຂັ້ນເມືອງ ເພື່ອຮັບປະກັນໃຫ້ທຸກໆບັນດາກິດຈະກໍາບັນລຸຜົນສໍາເລັດຕາມໄລຍະເວລາທີ່ກໍານົດໄວ້
- ປະເມີນທີມງານຂັ້ນເມືອງ ແລະ ຜູ້ປະສານງານຂັ້ນບ້ານ ພ້ອມທັງ ສະເໜີການຝຶກອົບຮົມທີ່ຈໍາເປັນໃຫ້ແກ່ເຂົາເຈົ້າ.
- ຊີ້ນໍາ ແລະ ຕິດຕາມການເຂົ້າຮ່ວມໃນກອງປະຊຸມວາງແຜນ ໃນຂັ້ນເມືອງ ແລະ ຊ່ວຍພະນັກງານໂຄງການ ຄປພ ຂັ້ນເມືອງ ແລະ ຂັ້ນບ້ານດັ່ງລຸ່ມນີ້:
  - ລະບຸຈຸດແຂງ ແລະ ທ່າແຮງຂອງເຂົາເຈົ້າ, ຄວາມຫຍຸ້ງຍາກ ແລະ ຂໍ້ຈໍາກັດ, ຄວາມຕ້ອງການ ແລະ ວິທີການອື່ນໆ ເພື່ອຊ່ວຍເຫລືອເຂົາເຈົ້າ.
  - ກໍານົດຈໍານວນໂຄງການໃຫ້ເຫັນໄດ້ຢ່າງຊັດເຈນເພື່ອໃຫ້ໄປຕາມນະໂຍບາຍຂອງໂຄງການ
- ຊ່ວຍໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ພ້ອມກັບນໍາສະເໜີວິທີການແກ້ໄຂບັນຫາພາຍໃນເມືອງ, ກຸ່ມບ້ານ ແລະ ບ້ານ.
- ຂຽນບົດລາຍງານປະຈໍາເດືອນກ່ຽວກັບຄວາມຄືບໜ້າຂອງວຽກ, ບັນຫາທີ່ພົບພໍ້, ຂໍ້ຂັດແຍ້ງ, ບັນຫາກ່ຽວກັບພະນັກງານ ແລະ ບັນຫາອື່ນໆ ເພື່ອລາຍງານຫາພາກສ່ວນທີ່ກ່ຽວຂ້ອງ ແລະ ຫ້ອງການ ທລຍ ແຂວງ.
- ສ້າງສາຍພົວພັນອັນດີກັບບັນດາອໍານາດການປົກຄອງທ້ອງຖິ່ນໃນທຸກລະດັບ, ແລະ ທຸກຂະແໜງການທີ່ກ່ຽວຂ້ອງ.
- ປະສານງານກັບບັນດາໂຄງການອື່ນໆທີ່ກ່ຽວຂ້ອງກັບວຽກງານການພັດທະນາຊຸມຊົນ.
- ປະຕິບັດທຸກໜ້າວຽກຕາມການຮ້ອງຂໍຂອງທີມງານ ຄປພ ແລະ ຂອງໂຄງການ.

## ຄຸນວຸດທິ ແລະ ປະສົບການ:

- ຮຽນຈົບໜຶ່ງໃນບັນດາສາຂາຕໍ່ໄປນີ້: ດ້ານກະສິກໍາ, ພັດທະນາຊຸມຊົນ, ສັງຄົມວິທະຍາ, ເສດຖະກິດຊົນນະບົດ, ການສຶກສາດ້ານການພັດທະນາ, ບໍລິຫານທຸລະກິດ ຫລືຂະແໜງການທີ່ກ່ຽວຂ້ອງ.
- ມີປະສົບການຢ່າງໜ້ອຍ 5 ປີ ໃນການຈັດຕັ້ງປະຕິບັດໂຄງການ, ການຝຶກອົບຮົມ ແລະ ການສ້າງທີມງານໃນການປຸກລະດົມຂົນຂວາຍຊຸມຊົນໃຫ້ເຂົ້າຮ່ວມກິດຈະກໍາດ້ານການປັບປຸງຊີວິດການເປັນຢູ່ ແລະ ດ້ານໂພສະນາການ.
- ມີປະສົບການຢ່າງໜ້ອຍ 2 ປີ ໃນການຄຸ້ມຄອງບໍລິຫານທີມງານໃນຂົງເຂດຫ່າງໄກສອກຫລີກ.
- ມີປະສົບການໃນການຈັດຝຶກອົບຮົມ ແລະ ກອງປະຊຸມ.
- ມີຄວາມຮູ້ໃນການວາງແຜນໂຄງການໂດຍນໍາໃຊ້ວິທີການ ຂັບເຄື່ອນໂດຍຊຸມຊົນ, ການກໍານົດ ແລະ ການຈັດບູລິມະສິດໂຄງການ, ການວິເຄາະ ແລະ ເທັກນິກການວາງແຜນຢ່າງມີເຫດຜົນ;
- ລຶ້ງເຄີຍກັບການຈັດຕັ້ງປະຕິບັດວຽກຂອງບັນດາໂຄງການຊ່ວຍເຫລືອ ຂອງລັດຖະບານ ແລະ ອົງການສາກົນອື່ນໆ
- ມີປະສົບການກ່ຽວກັບວຽກງານເຊື່ອມບົດບາດຍິງຊາຍ ແລະ ໃຫ້ການສະໜັບສະໜູນຊ່ວຍເຫລືອ (ກຸ່ມຊ່ວຍເຫລືອເຊິ່ງກັນ ແລະ ກັນ, ກຸ່ມຫັດຖະກໍາການຜະລິດ, ແລະ ກຸ່ມສ້າງລາຍຮັບດ້ານອື່ນໆ ໃນເຂດຊົນນະບົດຫ່າງໄກສອກຫລີກ ທີ່ມີກຸ່ມຊົນເຜົ່າທີ່ແຕກຕ່າງກັນ).
- ມີທັກສະໃນການນໍາໃຊ້ ຄອມພິວເຕີ້ໃນລະດັບປານກາງ (Ms Word, Excel, PowerPoint);
- ມີປະສົບການໃນການເຮັດວຽກເຂດຫ່າງໄກສອກຫລີກ, ທີ່ມີຫລາຍຊົນເຜົ່າທີ່ແຕກຕ່າງກັນ
- ມີປະສົບການໃນການເຮັດວຽກແລະ ປະສານງານກັບອໍານາດການປົກຄອງທ້ອງຖິ່ນເປັນຢ່າງດີ.